**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 15 /ຫກ

ນະຄອນຫຼວງວຽງຈັນ,ວັນທີ: 19 ເມສາ 2019


ກົມກອງງານ ຄຄຊ
ເລກທີ.0390.........
ວັນທີ 23 APR 2019
ໂທ 021 217770


# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 25-29/03/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0.82% ທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດຂອງສະຫະລັດອາເມລິກາປັບຕົວອອກມາດີ ເຫັນໄດ້ຈາກຕົວເລກຂາດດຸນການຄ້າໃນເດືອນມັງກອນ 2019 ຫຼຸດລົງ ມາຢູ່ໃນລະດັບ 51,1 ຕື້ໂດລາສະຫະລັດ ຈາກ 59,9 ຕື້ໂດລາສະຫະລັດໃນເດືອນຜ່ານມາ. ພ້ອມນັ້ນ, ຈຳນວນປະຊາຊົນທີ່ຂໍສະຫວັດດີການຄັ້ງທຳອິດຫຼຸດລົງຢູ່ໃນລະດັບ 211.000 ຈາກຈຳນວນ 221.000 ຄົນໃນອາທິດທີ່ຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 15-21/03/2019 | ອາທິດນີ້ 22-28/03/2019 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1.1302 | 1.1210 | 0.82% |
| ເຢນ/ໂດລາ | 110.53 | 110.79 | -0.23% |
| ບາດ/ໂດລາ | 31.710 | 31.720 | -0.03% |
| ເປໂຊ/ໂດລາ | 52.51 | 52.63 | -0.12% |
| ຣູເປັຍ/ໂດລາ | 14,170.00 | 14,235.00 | -0.46% |
| ໂດລາສິງກະໂປ/ໂດລາ | 1.3514 | 1.3558 | -0.32% |
| ຢວນ/ໂດລາ | 6.7152 | 6.7160 | -0.01% |

**1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ**

- ລາຄານ້ຳມັນ ຫຼຸດລົງ 1,22% ເປັນ 59,68 ໂດລາ/ບາເຣວ ເນື່ອງຈາກການສະໜອງນ້ຳມັນເພີ່ມຂຶ້ນຫຼາຍກວ່າຄວາມຕ້ອງການຊົມໃຊ້ນ້ຳມັນ ເຫັນໄດ້ຈາກຄັງສຳຮອງນ້ຳມັນດິບຂອງສະຫະລັດອາເມລິກາເພີ່ມຂຶ້ນໃນລະດັບ 2,80 ລ້ານບາເຣວ ຈາກຫຼຸດລົງໃນລະດັບ 9,59 ລ້ານບາເຣວ ຂອງອາທິດຜ່ານມາ;
- ລາຄາຄຳ ຫຼຸດລົງ 1,59% ເປັນ 1.290,87 ໂດລາ/ອອນ ເນື່ອງຈາກເງິນໂດລາແຂງຄ່າຂຶ້ນ ເຮັດໃຫ້ນັກລົງທຶນຊື້ຄຳ ແລະ ເຮັດສັນຍາຊື້-ຂາຍຄຳຫຼາຍຂຶ້ນ ເພື່ອເກງກຳໄລ.

**2. ສະພາບການຊື້-ຂາຍອັດຕາແລກປ່ຽນ**

**2.1 ສະພາບອັດຕາແລກປ່ຽນພາຍໃນ**

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0.17% ແຕ່ແຂງຄ່າຂຶ້ນ 0.05% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 0.66% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 3,49% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 15-21/03/2019 | | | ອາທິດນີ້ 22-28/03/2019 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8,639.83 | 8,671.67 | 8,656.95 | 8,657.53 | 8,687.00 | 8,671.60 | -0.20% | -0.18% | -0.17% | -0.64% | -0.68% | -0.66% |
| ບາດ | 275.69 | 277.41 | 276.79 | 275.92 | 277.16 | 276.65 | -0.08% | 0.09% | 0.05% | -3.52% | -3.50% | -3.49% |

**2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2**

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 3,5% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ຖານເງິນຕາ ເພີ່ມຂຶ້ນ 20,11%.
- ປະລິມານເງິນ M2 ເພີ່ມຂຶ້ນ 0,8% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10,17%.

**2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ**

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (22-28/03/2019) ເຫັນວ່າ ທະນາຄານທຸລະກິດ (ທທກ) ຂາຍເງິນໂດລາສຸດທິ 13,05 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 28,46 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 41,51 ລ້ານໂດລາ) ແຕ່ຊື້ເງິນບາດສຸດທິ 18,07 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 468,50 ລ້ານບາດ ແລະ ຂາຍເງິນບາດໄດ້ 450,43 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດ ເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາເພີ່ມຂຶ້ນ 50,15% ແຕ່ເງິນບາດເພີ່ມຂຶ້ນ 48,01%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດັດສົມ ໂດຍການຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 4,35 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 27,00 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 0,52 ລ້ານໂດລາ ແລະ ເງິນບາດ ຈຳນວນ 40,18 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ທຫລ ແມ່ນບໍ່ມີການເຄື່ອນໄຫວ.

---

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 08-14/03/2019 | | ອາທິດນີ້ 15-21/03/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **17.57** | **228.41** | **28.46** | **468.50** | **61.98%** | **105.11%** |
| - ທ/ຄທຸລະກິດລັດ | 11.38 | 112.96 | 11.70 | 43.00 | 2.81% | -61.93% |
| - ທ/ຄທຸລະກິດອື່ນໆ | 6.19 | 115.45 | 16.76 | 425.50 | 170.76% | 268.56% |
| **2. ການຂາຍເງິນຕາຕ່າງປະເທດ** | **29.03** | **392.43** | **41.51** | **450.43** | **42.99%** | **14.78%** |
| - ທ/ຄທຸລະກິດລັດ | 12.72 | 165.17 | 10.58 | 203.13 | -16.82% | 22.98% |
| - ທ/ຄທຸລະກິດອື່ນໆ | 16.31 | 227.26 | 30.93 | 247.30 | 89.64% | 8.82% |
| **ຊື້-ຂາຍສຸດທິ ທທກ** | **-11.46** | **-162.02** | **-13.05** | **18.07** | **13.87%** | **-111.02%** |
| - ຜິດດ່ຽງຊື້-ຂາຍ | -65.22% | -71.81% | -45.85% | 3.86% | -29.69% | -105.37% |
| - **ມູນຄ່າການຊື້-ຂາຍ** | **46.60** | **620.84** | **69.97** | **918.93** | **50.15%** | **48.01%** |
| **3. ການຊື້-ຂາຍລະຫວ່າງ ທຫລກັບ ທທກ** | **-2.56** | **-34.00** | **-4.35** | **-27.00** | | |
| - ທຫລ ຊື້ຈາກ ທທກ | 1.40 | 0.00 | 0.00 | 0.00 | | |
| - ທຫລ ຂາຍໃຫ້ ທທກ | 3.96 | 34.00 | 4.35 | 27.00 | | |
| **4. ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ** | **4.73** | **25.38** | **0.52** | **40.18** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0.00** | **-20.00** | | |
| -ທຫລ ຊື້ ຈາກພາກສ່ວນອື່ນໆ | 0,00 | 0,00 | 0.00 | 0.00 | | |
| -ທຫລ ຂາຍ ໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0.00 | 20.00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 03/2019 ຄາດວ່າຈະຢູ່ໃນລະດັບ 1,64%.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປລາວ ໄດ້ມີກະແສເງິນໄຫຼເຂົ້າສຸດທິ ຜ່ານລະບົບທະນາຄານ ຈຳນວນ 64,92 ລ້ານໂດລາສະຫະລັດ. ໃນນັ້ນ, ປະຈຳອາທິດວັນທີ (22-28/03/2019) ກະແສເງິນໄຫຼເຂົ້າມີຈຳນວນ 280,87 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການກູ້ຢືມຂອງຫົວໜ່ວຍທຸລະກິດ ຈຳນວນ 101,81 ລ້ານໂດລາສະຫະລັດ, ຮັບຈາກການສົ່ງອອກສິນຄ້າ ຈຳນວນ 74.14 ລ້ານໂດລາສະຫະລັດ ແລະ ຮັບຈາກການກູ້ຢືມຂອງທະນາຄານທຸລະກິດ ຈຳນວນ 30,00 ລ້ານໂດລາສະຫະລັດ). ກະແສເງິນໄຫຼອອກ ມີຈຳນວນ 215,95 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າ ຈຳນວນ 136,04 ລ້ານໂດລາສະຫະລັດ, ອານຸພັນທາງການເງິນ ຈຳນວນ 34,37 ລ້ານໂດລາສະຫະລັດ ແລະ ຊຳລະເງິນກູ້ຂອງທະນາຄານທຸລະກິດ ຈຳນວນ 20,00 ລ້ານໂດລາສະຫະລັດ).

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 703 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 15 ສະບັບ, ລວມມູນຄ່າໂອນທັງໝົດ 326,76 ຕື້ກີບ, ທຽບໃສ່ອາທິດຜ່ານມາ ຫຼຸດລົງ 253,37 ຕື້ກີບ ເທົ່າກັບ 43,67%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (22-28/03/2019) ມີທັງໝົດ 4.748 ຄັ້ງ ຊຶ່ງເປັນສະກຸນເງິນກີບທັງໝົດ. ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນຈຳນວນ 281 ຕື້ກີບຈາກ 1.701,97 ຕື້ກີບມາເປັນ 1.982,48 ຕື້ກີບ ເທົ່າກັບ 16,48%. ໃນນັ້ນ, ກະຊວງການເງິນມີການໂອນເງິນ

ຈຳນວນ 167 ຄັ້ງ ຊຶ່ງມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈຳນວນ 127,40 ຕື້ກີບ ຈາກ 356,24 ຕື້ກີບມາເປັນ 228,84 ຕື້ກີບ ເທົ່າກັບ 35,76%.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 832,45 ຈຸດ ຫຼຸດລົງ ຈາກ 834,21 ຈຸດ ຫຼື ເທົ່າກັບ 0,21% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 642.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,15 ຕື້ກີບ ເພີ່ມຂຶ້ນ 28,53% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດ 16,06% ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ BCEL.

ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| ບໍລິສັດ | ອາທິດນີ້ (15-21/03/2019) | | | ອາທິດນີ້ (22-28/03/2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ | ມູນຄ່າການ ຊື້-ຂາຍ | ລາຄາ ປ່ຽນແປງ (%) |
| **BCEL** | 314.100 | 2.043.750.000 | 6.850 | 568.200 | 3.875.260.000 | 6.750 | 80,90 | 89,62 | -1,46 |
| **EDL-GEN** | 152.300 | 597.285.000 | 3.930 | 67.800 | 266.640.000 | 3.930 | -55,48 | -55,36 | - |
| **LWPC** | - | - | 7.150 | - | - | 7.150 | - | - | - |
| **PTL** | - | - | 1.150 | - | - | 1.150 | - | - | - |
| **SVN** | 100 | 220.000 | 2.200 | - | - | 2.200 | -100 | -100 | - |
| **PCD** | - | - | 1.080 | - | - | 1.080 | - | - | - |
| **LCC** | - | - | 2.200 | - | - | 2.200 | - | - | - |
| **MHTL** | 33.300 | 94.095.000 | 2.900 | 6.100 | 17.485.000 | 2.900 | -81,68 | -81,42 | - |
| **LAT** | - | - | 725 | 300 | 217.500 | 725 | - | - | - |
| ທັງໝົດ | 499.800 | 2.735.350.000 | | 642.400 | 4.159.602.500 | | 28,53 | 52,07 | |

5. ວຽກງານອື່ນໆທີ່ພົ້ນເດັ່ນ.

- **ສຳເລັດການເຂົ້າຮ່ວມກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆ:** ກອງປະຊຸມການເກັບພາສີທີ່ດິນຜ່ານລະບົບທະນາຄານ ແລະ ເອກະສານທີ່ດິນທີ່ນຳໄປຄ້ຳປະກັນນຳບັນດາທະນາຄານເອກະຊົນ ແລະ ສະຖາບັນການເງິນ ໃນຂອບເຂດທົ່ວປະເທດ.
- **ສຳເລັດການຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆ:** ❶ກອງຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປະຈຳປີ 2019; ❷ກອງປະຊຸມເຜີຍແຜ່ວຽກການພັດທະນາແບບຍືນຍົງຢູ່ ສປປ ລາວ ພາຍໃນຂະແໜງການທະນາຄານ (SDG); ❸ກອງປະຊຸມເຜີຍແຜ່ກອງປະຊຸມເຜີຍແຜ່ຜົນກອງປະຊຸມຄະນະກຳມະການລະດັບສູງການເຊື່ອມໂຍງຂະແໜງການເງິນອາຊຽນ (SLC); ❹ ກອງປະຊຸມປັບປຸງກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ຮ່າງດຳລັດຂໍ້ມູນຂ່າວສານສິນເຊື່ອ (CIB);❺ກອງປະຊຸມປັບປຸງຮ່າງດຳລັດວ່າດ້ວຍການເຊົ່າສິນເຊື່ອ; ❻ກອງປະຊຸມຄົ້ນຄວ້າຮ່າງຂໍ້

ຕົກລົງວ່າດ້ວຍລະບົບການຊໍາລະຍ່ອຍ; ❼ກອງປະຊຸມຄົ້ນຄວ້າວຽກຄະນະຮັບຜິດຊອບວຽກງານສະມາຄົມທະນາຄານ ❽ກອງປະຊຸມວຽກຄະນະບາເຊວ (ຄະນະພາຍໃນ) ແລະ ❾ພິທີມອບ-ຮັບໃບຍ້ອງຍໍເພີ່ມເຕີມ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີໃຫ້ ທຫກ ທະນາຄານທຸລະກິດ ແລະ ສະຖາບັນການເງິນ.

- **ສໍາເລັດວຽກງານວິຊາສະເພາະ:** ❶ໄດ້ອອກແຈ້ງການກ່ຽວກັບການບໍ່ເກັບຄ່າທໍານຽມມອບເງິນສົດເງິນຕາຕ່າງປະເທດປະເພດໃບນ້ອຍ ແລະ ເງິນເສື່ອມຄຸນນະພາບ ຢູ່ທະນາຄານແຫ່ງ ສປປ ລາວ; ❷ສໍາເລັດການລົງກວດກາທະນາຄານສົ່ງເສີມກະສິກໍາ ປະຈໍາປີ 2018; ❸ສໍາເລັດການຮັບຮອງເອົາ 5 ທະນາຄານ ເຂົ້າຮ່ວມເປັນທະນາຄານຕົວແບບໃນການຈັດຕັ້ງປະຕິບັດຕາມຫຼັກການ ບາເຊວ 2.

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ;
- **ກະກຽມການເຂົ້າຮ່ວມກອງປະຊຸມ:** ກອງປະຊຸມຮ່ວມລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ ແລະ ກອງປະຊຸມກ່ຽວຂ້ອງອື່ນໆ (AFCDM+3 & AFCDM) ທີ່ປະເທດໄທ.
- **ກະກຽມການຈັດກອງປະຊຸມ, ສໍາມະນາ ແລະ ພິທີຕ່າງໆ:** ❶ກະກຽມກອງປະຊຸມວຽກງານກວດກາປະຈໍາປີ 2018 ແລະ ❷ກະກຽມເຂົ້າຮ່ວມກອງປະຊຸມຮ່ວມລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ ແລະ ກອງປະຊຸມອື່ນໆທີ່ກ່ຽວຂ້ອງ ຊຶ່ງຈະຈັດຂຶ້ນໃນລະຫວ່າງວັນທີ 2-6 ເມສາ 2019 ທີ່ ປະເທດໄທ.

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ພູມມະລີ ສີຣິພົນເດດ